ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ຫ້ອງການ

ເລກທີ 2099 /ຫກກປ

ນະຄອນຫຼວງວຽງຈັນ, ວັນທີ.......04...SEP...2012.....

ເລກທີ 1908 ວັນທີ 14/9/12

# ແຈ້ງການ

ຮຽນ: ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງ.

ເລື່ອງ: ການນຳໃຊ້ໃບອະນຸຍາດເຄື່ອນຍ້າຍໄມ້, ເຄື່ອງປ່າຂອງດົງ ພາຍໃນ ແລະໃບອະນຸຍາດນຳສົ່ງໄມ້ ແລະເຄື່ອງປ່າຂອງດົງ ອອກຕ່າງປະເທດ.

ເລກທີ 343 ວັນທີ 18 SEP 2012

- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ເລກທີ 32/ນຍ, ລົງວັນທີ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດປ່າໄມ້ ແລະການທຸລະກິດ ຄັ້ງວັນທີ 25-26 ມັງກອນ 2012;
- ອີງຕາມຄຳແນະນຳຂອງລັດຖະມົນຕີ ເລກທີ 0088/ກປ, ລົງວັນທີ 10 ກໍລະກົດ 2012 ກ່ຽວກັບການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ເລກທີ 32/ນຍ, ລົງວັນທີ 06 ມີນາ 2012 ວ່າດ້ວຍການຮັບຮອງເອົາຍັດຕິກອງປະຊຸມ ການຄຸ້ມຄອງປ່າໄມ້, ການກວດປ່າໄມ້ ແລະການທຸລະກິດ ຄັ້ງວັນທີ 25-26 ມັງກອນ 2012.

ຫ້ອງການກະຊວງກະສິກຳ ແລະປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາ ຂະແໜງປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນຜູ້ອອກໃບຕິດຕາມຕີກາປ່ອຍໄມ້ ແລະຢັ້ງຢືນເຄື່ອງປ່າຂອງດົງ; ສ່ວນພະແນກອຸດສາຫະກຳ ແລະການຄ້າປະຈຳແຂວງ, ນະຄອນຫຼວງ ເປັນຜູ້ອອກໃບອະນຸຍາດເຄື່ອນຍ້າຍໄມ້ທັງພາຍໃນ ແລະສົ່ງອອກຕ່າງປະເທດ. ແຕ່ມາເຖິງປັດຈຸບັນ, ພະແນກອຸດສາຫະກຳ ແລະການຄ້າປະຈຳແຂວງ, ນະຄອນຫຼວງ ໄດ້ຢຸດຕິການອອກໃບອະນຸຍາດດັ່ງກ່າວ ຕາມແຈ້ງການ ເລກທີ 1180/ອຄ.ຄພນ, ລົງວັນທີ 19 ມິຖຸນາ 2012 ແຕ່ຍັງອະນຸຍາດສົ່ງອອກສິນຄ້າໄມ້ທ່ອນ, ໄມ້ເລື່ອຍ ແລະຕໍໄມ້ ບາງກໍລະນີທີ່ລັດຖະບານຕົກລົງ ເທົ່ານັ້ນ.

ເພື່ອຮັບປະກັນໃຫ້ແກ່ ການນຳໃຊ້ໃບອະນຸຍາດເຄື່ອນຍ້າຍໄມ້ ແລະເຄື່ອງປ່າຂອງດົງ ພາຍໃນ ແລະໃບອະນຸຍາດນຳສົ່ງໄມ້ ແລະເຄື່ອງປ່າຂອງດົງ ອອກຕ່າງປະເທດ ຖືກຕ້ອງສອດຄ່ອງກັບບັນດານິຕິກຳທີ່ກ່ຽວຂ້ອງ ແລະຮັບປະກັນຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ນັ້ນ

## ຫົວໜ້າຫ້ອງການກະຊວງກະສິກຳ ແລະປ່າໄມ້ ອອກແຈ້ງການ ດັ່ງນີ້:

1. ໃຫ້ຢຸດຕິການນຳໃຊ້ "ປື້ມໃບຕິດຕາມການຕີກາປ່ອຍໄມ້ ແລະຢັ້ງຢືນເຄື່ອງປ່າຂອງດົງ" ແບບທີ່ເຄີຍປະຕິບັດຜ່ານມານັ້ນ; ຖ້າຫາກຍັງບໍ່ທັນໄດ້ນຳໃຊ້ ຫຼືນຳໃຊ້ບໍ່ທັນໝົດ ກໍໃຫ້ສົ່ງຄືນກົມປ່າໄມ້ ບໍ່ໃຫ້ກາຍເດືອນ

ກັນຍາ (9) 2012 ແລະຫາກການຈັດຕັ້ງ ຫຼືບຸກຄົນໃດ ຍັງສືບຕໍ່ນຳໃຊ້ ຈະຖືວ່າເປັນການລະເມີດລະບຽບກົດໝາຍ ແລະຈະຖືກດຳເນີນຄະດີ ຕາມລະບຽບກົດໝາຍ;

2. ໃຫ້ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາອອກ "ໃບອະນຸຍາດເຄື່ອນຍ້າຍໄມ້, ເຄື່ອງປ່າຂອງດົງ ພາຍໃນ ແລະໃບອະນຸຍາດນຳສົ່ງໄມ້ ແລະເຄື່ອງປ່າຂອງດົງ ອອກຕ່າງປະເທດ" ແບບໃໝ່ ຕາມການກຳນົດຂອງກົມປ່າໄມ້ ທີ່ໄດ້ຄັດຕິດມາພ້ອມນີ້, ໂດຍໃຫ້ເລີ່ມຕົ້ນນຳໃຊ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແຕ່ວັນທີ 10 ກັນຍາ 2012 ເປັນຕົ້ນໄປ;

3. ການຂຽນໃສ່ປຶ້ມໃບອະນຸຍາດດັ່ງກ່າວ ຕ້ອງສະອາດ, ບໍ່ມີຮອຍຂີດ-ຂ້າ; ຖ້າຊຸດໃດມີຮອຍຂີດ-ຂ້າ ຫຼືບໍ່ສາມາດນຳໃຊ້ໄດ້ ແມ່ນໃຫ້ນຳສົ່ງກົມປ່າໄມ້. ໃບອະນຸຍາດເຄື່ອນຍ້າຍໄມ້, ເຄື່ອງປ່າຂອງດົງ ພາຍໃນ ແລະໃບອະນຸຍາດນຳສົ່ງໄມ້ ແລະເຄື່ອງປ່າຂອງດົງ ອອກຕ່າງປະເທດ ແຕ່ລະຊຸດປະກອບມີ ສາມ ໃບ (ສາມ ສີ) ຊຶ່ງນຳໃຊ້ຕ່າງກັນ ດັ່ງນີ້:

   3.1. ໃບສີຂາວ ແມ່ນຄັດຕິດໄປນຳສິນຄ້າ;

   3.2. ໃບສີບົວ ແມ່ນໃຫ້ຂະແໜງປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເກັບໄວ້;

   3.3. ໃບສີເຫຼືອງ ແມ່ນໃຫ້ສົ່ງກົມປ່າໄມ້.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຊາບ ແລະປະຕິບັດຕາມເນື້ອໃນແຈ້ງການນີ້ດ້ວຍ.

ຮຫ. ຫົວໜ້າຫ້ອງການກະຊວງກະສິກຳ ແລະປ່າໄມ້

(ລາຍເຊັນ ແລະ ກາປະທັບ: ກະຊວງກະສິກຳ ແລະ ປ່າໄມ້ ຫ້ອງການ)

ນ.ບົວສະຫວັນ ຕັນແສນສີ

<u>ບ່ອນສົ່ງ:</u>

| | |
|---|---|
| 1. ທ່ານ ລມຕ, ລມຊ ທ່ານລະ | 01 ສະບັບ (ໃຊ້ຕາງລາຍງານ); |
| 2. ຄະນະຫ້ອງການ ທ່ານລະ | 01 ສະບັບ (ເພື່ອຊາບ); |
| 3. ຫ້ອງການກະຊວງ ອຄ | 01 ສະບັບ (ເພື່ອຊາບ); |
| 4. ຫ້ອງການກະຊວງການເງິນ | 01 ສະບັບ (ເພື່ອຊາບ); |
| 5. ກົມປ່າໄມ້ | 01 ສະບັບ (ເພື່ອຕິດຕາມ); |
| 6. ກົມກວດກາປ່າໄມ້ | 01 ສະບັບ (ເພື່ອຕິດຕາມ); |
| 7. ກົມ, ສະຖາບັນ ພາກສ່ວນລະ | 01 ສະບັບ (ເພື່ອຊາບ); |
| 8. ພະແນກກົດໝາຍ, ຫກກປ | 01 ສະບັບ (ເພື່ອຕິດຕາມ); |
| 9. ເກັບມ້ຽນ | 01ສະບັບ. |